**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ ເລກທີ 1939 /ກງ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2024

# ຄໍາແນະນໍາ

## ກ່ຽວກັບການຈັດຕັ້ງປະຕິບັດ ດໍາລັດ ວ່າດ້ວຍນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ

- ອີງຕາມ ດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ມາດຕາ 28 ຂອງດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 349/ລບ, ລົງວັນທີ 13 ພະຈິກ 2023 ວ່າດ້ວຍນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ;
- ອີງຕາມ ໜັງສືສະເໜີ ຂອງກົມກວດກາ ກະຊວງການເງິນ ເລກທີ 306/ກກ, ລົງວັນທີ 18 ມີນາ 2024 ແລະ ບົດລາຍງານ ສະບັບເລກທີ 595/ກກ, ລົງວັນທີ 17 ພຶດສະພາ 2024.

### ລັດຖະມົນຕີ ກະຊວງການເງິນ ອອກຄໍາແນະນໍາ ດັ່ງນີ້:

**I. ຈຸດປະສົງ**

1. ເພື່ອຜັນຂະຫຍາຍເນື້ອໃນບາງມາດຕາຂອງ ດໍາລັດ ວ່າດ້ວຍນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ສະບັບເລກທີ 349/ລບ, ລົງວັນທີ 13 ພະຈິກ 2023 ໃຫ້ລະອຽດ, ຈະແຈ້ງ, ເຂົ້າໃຈງ່າຍ ແລະ ສາມາດຈັດຕັ້ງປະຕິບັດ ຢ່າງເປັນເອກະພາບ ໃນຂອບເຂດ ທົ່ວປະເທດ;
2. ເພື່ອໃຫ້ອົງການຈັດຕັ້ງລັດ ແຕ່ລະຂັ້ນ ທີ່ເຮັດໜ້າທີ່ໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ໄດ້ເຂົ້າໃຈຖືກຕ້ອງ, ຄົບຖ້ວນ, ເລິກເຊິ່ງ, ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
3. ເພື່ອອະທິບາຍ, ຍົກຕົວຢ່າງ ກ່ຽວກັບວິທີການຄິດໄລ່ ແລະ ການນໍາໃຊ້ ໃຫ້ແຕ່ລະພາກສ່ວນ ມີຄວາມເປັນເອກະພາບ ແນ່ໃສ່ເຮັດໃຫ້ການຈັດຕັ້ງປະຕິບັດດໍາລັດສະບັບນີ້ ມີຜົນສັກສິດ.

**II. ແນະນໍາເພີ່ມເຕີມເນື້ອໃນບາງມາດຕາຂອງດໍາລັດ**

1. **ມາດຕາ 06 ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ**

   ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະຕິບັດໜ້າທີ່ ຫຼື ປະກອບສ່ວນ ໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບງົບປະມານແຫ່ງລັດ ທີ່ສາມາດເກັບກູ້ມູນຄ່າເສຍຫາຍ ຫຼື ເງິນຈາກການປັບໃໝການລະເມີດກົດໝາຍ ແລະ ລະບຽບການຈາກຜູ້ລະເມີດ ຫຼື ກະທໍາຜິດ ກົດລະບຽບ ແລະ ລະບຽບການເງິນ ເຂົ້າງົບປະມານແຫ່ງລັດ ຕາມລາຍການທີ່ໄດ້ກໍານົດໄວ້ໃນມາດຕາ 07 ຂອງດໍາລັດສະບັບນີ້.

2. **ມາດຕາ 07 ລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ**

2.1 **ລາຍຮັບຈາກການປັບໃໝ ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ:**

ແມ່ນລາຍຮັບເປັນເງິນ ທີ່ເກີດຈາກການລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຖືກຄິດໄລ່ຕາມອັດຕາຄ່າປັບໃໝ ຫຼື ຖືກກຳນົດເປັນມູນຄ່າເດັດຖານ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ນິຕິກຳຕ່າງໆ ແລະ ໄດ້ມອບເງິນຄ່າປັບໃໝດັ່ງກ່າວ ເຂົ້າບັນຊີລໍຖ້າທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດ, ຄັງເງິນປະຈຳແຂວງ-ນະຄອນຫຼວງ ຈຶ່ງສາມາດນຳມາເປັນລາຍການໃຫ້ຫັກເປັນເງິນນະໂຍບາຍ.

2.2 **ລາຍຮັບທີ່ເກັບກູ້ໄດ້ເພີ່ມ ຕາມຜົນການກວດກາ, ກວດສອບ ທີ່ໄດ້ຜ່ານການກວດກາ, ກວດສອບມາກ່ອນ.**

ແມ່ນລາຍຮັບເປັນເງິນ ທີ່ສາມາດເກັບກູ້ໄດ້ຈາກການດຳເນີນການກວດກາ, ກວດສອບ, ການເຄື່ອນໄຫວຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການຕ່າງໆ ພາຍຫຼັງທີ່ອົງການຈັດຕັ້ງບໍລິຫານລັດ, ຫົວໜ່ວຍຖືບັນຊີ (ບຸກຄົນ, ນິຕິບຸກຄົນ) ໄດ້ປິດສະຫຼຸບບັນຊີ ແລະ ຖືກໄລ່ລຽງຂາດຕົວໄປແລ້ວ (ບໍ່ໃຫ້ຖືເອົາການປິດສະຫຼຸບບັນຊີເບື້ອງຕົ້ນມາເປັນບ່ອນອີງ), ຖ້າມີການກວດກາ, ກວດສອບ ພົບເຫັນລາຍຮັບເພີ່ມຕື່ມ ຈາກການເຊື່ອງອຳ, ການແຈ້ງລາຍຮັບບໍ່ຄົບຖ້ວນ ເຊິ່ງທັງໝົດນັ້ນຈຶ່ງເອີ້ນວ່າ ລາຍຮັບຈາກການເກັບກູ້ໄດ້ເພີ່ມ;

- ລາຍການ ທີ່ບໍ່ອະນຸຍາດໃຫ້ເອົາມາເປັນພື້ນຖານໃນການຄິດໄລ່ນະໂຍບາຍ ປະກອບດ້ວຍ:
  + ໜີ້ຕ້ອງຮັບ ຂອງບັນດາຂະແໜງການ, ກົມກອງ, ຫົວໜ່ວຍຖືບັນຊີ (ບຸກຄົນ, ນິຕິບຸກຄົນ) ທີ່ມີບັນຊີຕິດຕາມ, ເລັ່ງທວງຕໍ່ເນື່ອງ, ຕິດຕາມປົກກະຕິໃນລະບົບ ລວມທັງໜີ້ທວງຍາກຕ່າງໆ; ຍົກເວັ້ນໜີ້ຕ້ອງຮັບ ທີ່ກວດສອບເຫັນເພີ່ມ ບໍ່ນອນໃນບັນຊີຕິດຕາມ ທີ່ສາມາດເລັ່ງທວງໄດ້ ໃຫ້ມອບເຂົ້າງົບປະມານແຫ່ງລັດ ແມ່ນໃຫ້ຖືເປັນພື້ນຖານ ໃນການຄິດໄລ່ນະໂຍບາຍ;
  + ໜີ້ສິນຂອງພະນັກງານ ໄດ້ຍັກຍອກ ເອົາເງິນໄປໃຊ້ຈ່າຍສ່ວນຕົວໂດຍບໍ່ໄດ້ຮັບອະນຸຍາດ; ຍົກເວັ້ນໜີ້ຂອງພະນັກງານ ທີ່ບັນດາຂະແໜງການ, ກົມກອງ, ຫົວໜ່ວຍຖືບັນຊີ (ບຸກຄົນ, ນິຕິບຸກຄົນ) ບໍ່ລາຍງານ ແຕ່ໄດ້ກວດສອບເຫັນເພີ່ມ ໃຫ້ມອບເຂົ້າງົບປະມານແຫ່ງລັດ ກໍ່ເປັນພື້ນຖານຄິດໄລ່ນະໂຍບາຍ;
  + ບັນດາລາຍຮັບກວດກາ, ກວດສອບເຫັນເພີ່ມ ທີ່ຖືກແກ້ໄຂດ້ວຍຮູບການ ບໍ່ເປັນເງິນສົດ-ເງິນໂອນ ຫຼື ສະສາງດ້ວຍການຈົດຮັບ-ຈົດຈ່າຍ ໃນແຜນງົບປະມານໃນປີຕໍ່ໄປ (ແມ່ນບໍ່ສາມາດເອົາມາເປັນພື້ນຖານໃນການຄິດໄລ່ນະໂຍບາຍໄດ້).

ສຳລັບດ້ານລາຍຈ່າຍ ທີ່ສາມາດເອີ້ນວ່າ ເປັນການເກັບກູ້ໄດ້ເພີ່ມ ແມ່ນລາຍຈ່າຍຈາກການຈ່າຍຊ້ຳຊ້ອນ, ຈ່າຍເກີນບໍລິມາດວຽກ, ຈ່າຍນອກແຜນ, ລາຍຈ່າຍບໍ່ຜ່ານການປະມູນຈັດຊື້-ຈັດຈ້າງ, ລາຍຈ່າຍທີ່ບໍ່ມີຕົວຕົນ (ຫ້າມບໍ່ໃຫ້ເອົາລາຍຈ່າຍທີ່ຖືກສະສາງດ້ວຍການຈົດຮັບ-ຈົດຈ່າຍ ໃນແຜນງົບປະມານ ມາເປັນພື້ນຖານຄິດໄລ່);

2.3 **ລາຍຮັບຈາກການຂາຍຊັບສິນທີ່ຖືກຮິບເປັນຂອງລັດ**

ແມ່ນລາຍຮັບຈາກ ການຂາຍເຄື່ອງຂອງກາງ ທີ່ໄດ້ດຳເນີນການກວດກາ, ກວດສອບ ແລະ ຜ່ານຂະບວນການຍຸດຕິທຳ. ພ້ອມກັນນັ້ນ, ເຄື່ອງຮິບຖືກສານຕັດສິນ ຫຼື ພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍພາກສ່ວນຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ດຳເນີນປະມູນຂາຍຕາມລະບຽບການ ໄດ້ມາເປັນເງິນ ຊຶ່ງເງິນຈຳນວນດັ່ງກ່າວ ສາມາດນຳມາເປັນລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ ຕາມມາດຕາ 8, ມາດຕາ 9 ແລະ ມາດຕາ 10 ຂອງດຳລັດດສະບັບເລກທີ 349/ລບ.

3. **ມາດຕາ 08 ອັດຕາສ່ວນການຫັກເປັນເງິນນະໂຍບາຍ**

ອັດຕາສ່ວນການຫັກເປັນເງິນນະໂຍບາຍ ພາຍຫຼັງຫັກຄ່າສິນເປືອງ ຕາມລາຍການທີ່ໄດ້ລະບຸໄວ້ໃນ ມາດຕາ 09 ຂອງດໍາລັດ ສະບັບ 349/ລບ. ການແບ່ງສ່ວນໃຫ້ຫັກເປັນເງິນນະໂຍບາຍໃຫ້ປະຕິບັດຕາມ ແຕ່ລະກໍລະນີດັ່ງນີ້:

3.1 ລາຍຮັບຈາກການປັບໃໝ ໃຫ້ຫັກສີ່ສິບສ່ວນຮ້ອຍ (40%) ເປັນເງິນນະໂຍບາຍ, ສ່ວນຫົກສິບສ່ວນຮ້ອຍ (60%) ໃຫ້ມອບເຂົ້າງົບປະມານແຫ່ງລັດຕາມລະບຽບການ.

**<u>ຕົວຢ່າງ 01</u>** : ບໍລິສັດ ກໍ່ສ້າງ ກ ຈໍາກັດຜູ້ດຽວ, ໄດ້ສະຫຼຸບບັນຊີ ສົ່ງໃຫ້ຂະແໜງສ່ວຍສາອາກອນ ແລະ ໄດ້ຮັບການກວດກາໄລ່ລຽງແບບຄົບຊຸດສໍາເລັດແລ້ວ ແຕ່ໄດ້ມີການກວດກາຄືນພົບເຫັນ ບໍລິສັດ ໄດ້ເຊື່ອງອໍາລາຍຮັບ, ແຈ້ງລາຍຮັບບໍ່ຄົບຖ້ວນ ເປັນເງິນຈໍານວນ 1,200,000,000 ກີບ, ພັນທະອາກອນທີ່ຄິດໄລ່ໄດ້ມີດັ່ງນີ້.

| | | | | |
|---|---|---|---|---|
| 1. ອມພ | 1,200,000,000 ກີບ x 7% | = | 84,000,000 | ກີບ (ມອບເຂົ້າງົບປະມານ); |
| 2. ອກລ ແບບບັງຄັບ | 1,200,000,000 ກີບ x 15% x 20% | = | 36,000,000 | ກີບ (ມອບເຂົ້າງົບປະມານ); |
| 3. ປັບໃໝ ອມພ | 84,000,000 ກີບ x 50% | = | 42,000,000 | ກີບ; |
| 4. ປັບໃໝ ອກລ | 36,000,000 ກີບ x 50% | = | 18,000,000 | ກີບ; |
| ລວມພັນທະອາກອນ ແລະ ຄ່າປັບໃໝທັງໝົດ ( 1+2+3+4 ) | | = | 180,000,000 | ກີບ. |

**<u>ວິທີການຄິດໄລ່ການຫັກເງິນນະໂຍບາຍ</u>**:

| | | | | |
|---|---|---|---|---|
| 1. ປັບໃໝ ອມພ | 84,000,000 ກີບ x 50% | = | 42,000,000 | ກີບ; |
| 2. ປັບໃໝ ອກລ | 36,000,000 ກີບ x 50% | = | 18,000,000 | ກີບ; |
| 3. ພື້ນຖານຄິດໄລ່ ( 1 + 2 ) | | = | 60,000,000 | ກີບ; |
| 4. ຫັກ ຄ່າສິນເປືອງ ຕາມມາດຕາ 9 (ຖ້າມີ) | | = | - | ກີບ; |
| 5. ມູນຄ່າຍັງເຫຼືອ ນໍາມາຄິດໄລ ( 3 - 4 ) | | = | 60,000,000 | ກີບ; |
| - ຄິດໄລ່ມອບເຂົ້າງົບປະມານ | 60,000,000 ກີບ x 60% (5 x 60%) | = | 36,000,000 | ກີບ; |
| - ຄິດໄລ່ຫັກເປັນເງິນນະໂຍບາຍ | 60,000,000 ກີບ x 40% (5 x 40%) | = | 24,000,000 | ກີບ. |

**ໝາຍເຫດ**: ທຸກລາຍຮັບທີ່ໄດ້ຮັບຈາກການປັບໃໝ ຕາມກົດໝາຍ, ລະບຽບການອື່ນໆຢູ່ແຕ່ລະຂົງເຂດທີ່ກ່ຽວຂ້ອງ ແມ່ນໃຫ້ຄິດໄລ່ແບບດຽວກັນກັບຕົວຢ່າງຂ້າງເທິງນີ້. ແຕ່ສູງສຸດບໍ່ໃຫ້ເກີນ 1,000,000,000 ກີບ (ໜຶ່ງຕື້ກີບ), ສ່ວນເຫຼືອນັ້ນໃຫ້ມອບເຂົ້າງົບປະມານແຫ່ງລັດຕາມລະບຽບການ;

3.2 ລາຍຮັບຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ແລະ ຂໍ້ 3 ມາດຕາ 7 ຂອງດໍາລັດສະບັບນີ້ ໃຫ້ຫັກ 70% ມອບເຂົ້າງົບປະມານ ແລະ ສາມສິບສ່ວນຮ້ອຍ (30%) ເປັນເງິນນະໂຍບາຍ ແຕ່ສູງສຸດບໍ່ໃຫ້ເກີນ 1,000,000,000 ກີບ (ໜຶ່ງຕື້ກີບ), ສ່ວນເຫຼືອນັ້ນໃຫ້ມອບເຂົ້າງົບປະມານແຫ່ງລັດຕາມລະບຽບການ;

**<u>ຕົວຢ່າງ 02</u>**: ກໍລະນີອົງການຈັດຕັ້ງ ທີ່ສາມາດກວດສອບ-ກວດກາ ພົບເຫັນ ຫົວໜ່ວຍງົບປະມານ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ເກັບຄ່າບໍລິການ ຕາມລັດຖະບັນຍັດ ສະບັບເລກທີ 002/ປທ, ລົງວັນທີ 17 ມິຖຸນາ 2021 ຈໍານວນ 100,000,000 ກີບ ແຕ່ບໍ່ມອບເຂົ້າງົບປະມານ ຊຶ່ງໄປຝາກໄວ້ບັນຊີເງິນຝາກທະນາຄານທຸລະກິດ ນອກລະບົບງົບປະມານແຫ່ງລັດ ແລະ ໄດ້ເອົາມາແບ່ງປັນກັນພາຍໃນອົງກອນ.

**<u>ວິທີຄິດໄລ່</u>**:

| | | | |
|---|---|---|---|
| 1. ພື້ນຖານຄິດໄລ່ | = | 100,000,000 | ກີບ. |
| 2. ຫັກຄ່າສິນເປືອງ ຕາມມາດຕາ 9 (ຖ້າມີ) | = | - | ກີບ. |
| 3. ມູນຄ່າຍັງເຫຼືອ ນໍາມາຄິດໄລ່ ( 1 – 2 ) | = | 100,000,000 | ກີບ. |

4. ຄິດໄລ່ມອບເຂົ້າງົບປະມານ (3 x 70%) = 70,000,000 ກີບ.
5. ຄິດໄລ່ຫັກເປັນເງິນນະໂຍບາຍ (3 x 30% ) = 30,000,000 ກີບ.

**ຕົວຢ່າງ 03**: ຄະນະກວດສອບ-ກວດກາ ໄດ້ດຳເນີນການກວດກາພົບເຫັນເງິນທີ່ເຊື່ອງອຳ ຫຼື ຈາກການສໍ້ລາດບັງຫຼວງ ຈຳນວນ 5,000,000,000 ກີບ (ຫ້າຕື້ກີບ) ຕໍ່ວຽກງານກວດກາ 01 ຄັ້ງ, ໃນການກວດກາຄັ້ງນີ້ ມີລາຍຈ່າຍຄ່າສິ້ນເປືອງເປັນຄ່າໃຊ້ຈ່າຍໃນການທົດສອບຄຸນນະພາບ ຈຳນວນ 20,000,000 ກີບ.

**ວິທີການຄິດໄລ່**:

1. ພື້ນຖານຄິດໄລ່ = 5,000,000,000 ກີບ.
2. ຫັກ ຄ່າສິ້ນເປືອງ = 20,000,000 ກີບ.
3. ມູນຄ່າຍັງເຫຼືອ ນຳມາຄິດໄລ ຄິດໄລ່ ( 1 – 2 ) = 4,980,000,000 ກີບ.
4. ຄິດໄລ່ມອບເຂົ້າງົບປະມານ 70% (3 x 70%) = 3,486,000,000 ກີບ.
5. ຄິດໄລ່ຫັກເປັນເງິນນະໂຍບາຍ 30% (3 x 30%) = 1,494,000,000 ກີບ.

ກໍລະນີດັ່ງກ່າວນີ້ເຫັນວ່າ ຈຳນວນເງິນທີ່ຫັກເປັນເງິນນະໂນບາຍແມ່ນ 1,494,000,000 ກີບ ເກີນອັດຕາສ່ວນການຫັກເປັນເງິນນະໂຍບາຍ ທີ່ໄດ້ກຳນົດໄວ້ໃນມາດຕາ 08 ກຳນົດໄວ້ ສູງສຸດບໍ່ໃຫ້ເກີນ 1,000,000,000 ກີບ, ສະນັ້ນ ຈຳນວນເງິນທີ່ອະນຸຍາດໃຫ້ນຳໄປຄິດໄລ່ເງິນນະໂຍບາຍໃຫ້ຜູ້ມີຜົນງານ ແມ່ນ 1,000,000,000 ກີບ, ສ່ວນຈຳນວນທີ່ເກີນ 494,000,000 ກີບ ແມ່ນໃຫ້ມອບເຂົ້າງົບປະມານແຫ່ງລັດທັງໝົດ.

**ຕົວຢ່າງ 04**: ຫຼັງຈາກການປະຕິບັດຄຳຕັດສິນຂອງສານ ໄດ້ຂາຍເຄື່ອງຮິບເປັນປະເພດພາຫະນະ ຈຳນວນ 01 ຄັນ, ມູນຄ່າຕີລາຄາປະມູນຂາຍເທົ່າກັບ 400,000,000 ກີບ. (ຂາຍເປັນເງິນເຂົ້າບັນຊີ............)

**ພາຍຫຼັງຂາຍແລ້ວຄິດໄລ່**:

1. ພື້ນຖານຄິດໄລ່ = 400,000,000 ກີບ.
2. ຫັກ ຄ່າສິ້ນເປືອງ ຕາມມາດຕາ 9 (ຖ້າມີ) = - ກີບ.
3. ມູນຄ່າຍັງເຫຼືອ ນຳມາຄິດໄລ່ ( 1 – 2 ) = 400,000,000 ກີບ.
4. ຄິດໄລ່ມອບເຂົ້າງົບປະມານ (3 x 70%) = 280,000,000 ກີບ.
5. ຄິດໄລ່ຫັກເປັນເງິນນະໂຍບາຍ (3 x 30%) = 120,000,000 ກີບ.

**ໝາຍເຫດ**: ທຸກລາຍຮັບທີ່ເປັນເງິນ ທີ່ສາມາດເກັບກູ້ໄດ້ຈາກການດຳເນີນການກວດກາ, ກວດສອບ, ການເຄື່ອນໄຫວຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການຕ່າງໆ ພາຍຫຼັງທີ່ອົງການຈັດຕັ້ງບໍລິຫານລັດໄດ້ປິດສະຫຼຸບບັນຊີ ແລະ ຖືກໄລ່ລຽງຂາດຕົວໄປແລ້ວ ແມ່ນໃຫ້ຄິດໄລ່ແບບດຽວກັນກັບຕົວຢ່າງຂ້າງເທິງນີ້. ແຕ່ສູງສຸດບໍ່ໃຫ້ເກີນ 1,000,000,000 ກີບ (ໜຶ່ງຕື້ກີບ), ສ່ວນເຫຼືອນັ້ນໃຫ້ມອບເຂົ້າງົບປະມານຕາມລະບຽບການ;

3.3 ຜົນການກວດກາ-ກວດສອບ ທີ່ກວດເຫັນບໍ່ສາມາດຄິດໄລ່ເປັນເງິນນະໂຍບາຍ ມີດັ່ງນີ້:

**ຕົວຢ່າງ 05:** ກໍລະນີອົງການຈັດຕັ້ງ ດຳເນີນກວດສອບ-ກວດກາ ພົບເຫັນ ຫົວໜ່ວຍງົບປະມານໃດໜຶ່ງ, ບຸກຄົນ ຫຼື ນິຕິບຸກຄົນ ຈັດເກັບລາຍຮັບຄ່າທຳນຽມ, ຄ່າບໍລິການ ຕາມລັດຖະບັນຍັດ ສະບັບເລກທີ 002/ປທ, ລົງວັນທີ 17 ມິຖຸນາ 2021 ຈຳນວນ 100,000,000 ກີບ ແຕ່ຍັງບໍ່ໄດ້ມອບເຂົ້າງົບປະມານເທື່ອ. ແຕ່ໄດ້ມອບເຂົ້າບັນຊີເງິນຝາກ ບັນຊີ 471 ຂອງຄັງເງິນແຫ່ງຊາດ ຫຼື ຄັງເງິນປະຈຳແຂວງ ຍັງບໍ່ທັນໄດ້ຮັບການສະສາງ ຫຼື ຈົດກາຍທາງດ້ານບັນຊີໃນລະບົບງົບປະມານ ແລະ ຈຳນວນເງິນດັ່ງກ່າວ ແມ່ນມອບຢູ່ໃນລະບົບງົບປະມານແຫ່ງລັດ **"ບໍ່ສາມາດຫັກເປັນເງິນນະໂຍບາຍ"** ຕາມດຳລັດສະບັບນີ້ໄດ້.

**ໝາຍເຫດ**: ຫ້າມບໍ່ໃຫ້ເອົາລາຍຮັບທີ່ເປັນໜີ້ຕ້ອງຮັບຂອງບັນດາຂະແໜງການ, ກົມກອງ ທີ່ມີບັນຊີຕິດຕາມ, ເລັ່ງທວງຕໍ່ເນື່ອງ, ຕິດຕາມປົກກະຕິໃນລະບົບ ລວມທັງໜີ້ທວງຍາກຕ່າງໆ, ໜີ້ສິນຂອງພະນັກງານໄດ້ຍັກຍອກ

ເອົາເງິນໄປໃຊ້ຈ່າຍສ່ວນຕົວໂດຍບໍ່ໄດ້ຮັບອະນຸຍາດ ແລະ ບັນດາລາຍຮັບກວດກາ, ກວດສອບເຫັນເພີ່ມທີ່ຖືກແກ້ໄຂຮຸບການ ບໍ່ເປັນເງິນສົດ-ເງິນໂອນ ຫຼື ສະສາງດ້ວຍການຈົດຮັບ-ຈົດຈ່າຍ ໃນແຜນງົບປະມານໃນປີຕໍ່ໄປ ມາເປັນພື້ນຖານຄິດໄລ່);

4. **ການຫັກຄ່າສິ້ນເປືອງ.**

ຄ່າສິ້ນເປືອງ ແມ່ນຄ່າໃຊ້ຈ່າຍ ທີ່ເກີດຂຶ້ນໃນໄລຍະການດຳເນີນການກວດກາ, ກວດສອບ ຫຼື ໄລຍະທີ່ກຳລັງດຳເນີນໃນຂະບວນການຍຸຕິທຳ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 9 ຂອງ ດຳລັດສະບັບເລກທີ 349/ລບ. ພາຍຫຼັງທີ່ໄດ້ແກ້ໄຂ/ເກັບກູ້/ປະຕິບັດ ຜົນການກວດກາ, ຜົນການກວດສອບ ແລະ ໄດ້ປະຕິບັດຄຳຕັດສິນຂອງສານແລ້ວ ແມ່ນໃຫ້ຫັກຄ່າສິ້ນເປືອງກ່ອນ ແລ້ວຈຶ່ງໃຫ້ແບ່ງສ່ວນຫັກເປັນເງິນນະໂຍບາຍ.

5. **ມາດຕາ 10 ການຄິດໄລ່ເງິນນະໂຍບາຍ ໃຫ້ຜູ້ມີຜົນງານ**

ການຄິດໄລ່ເງິນນະໂຍບາຍ ໃຫ້ເອົາຈຳນວນເງິນທີ່ຫັກເປັນເງິນນະໂຍບາຍ ຈຳນວນສີ່ສິບສ່ວນຮ້ອຍ (40%) ແລະ ສາມສິບສ່ວນຮ້ອຍ (30%) ທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ມາຕັ້ງເປັນຮ້ອຍສ່ວນຮ້ອຍ (100%) ແລ້ວໃຫ້ແບ່ງປັນດັ່ງນີ້:

1) ຜູ້ສະໜອງຂໍ້ມູນຂ່າວສານ ຫຼື ຜູ້ບອກຂ່າວ ສິບສ່ວນຮ້ອຍ (10%);
2) ຄະນະກວດກາ, ຄະນະກວດສອບ ຫຼື ຄະນະສະເພາະກິດ ສາມສິບຫ້າສ່ວນຮ້ອຍ (35%) ແມ່ນບຸກຄົນ, ນິຕິບຸກ ຫຼື ອົງການ ທີ່ໄດ້ຮັບການແຕ່ງຕັ້ງດຳເນີນການກວດສອບ-ກວດກາ ເຫັນເພີ່ມ ຕາມຂໍ້ 2 ມາດຕາ 7 ພ້ອມທັງສາມາດເລັ່ງທວງ ແລະ ມອບເງິນຈຳນວນດັ່ງກ່າວເຂົ້າງົບປະມານໄດ້;
3) ອົງການທີ່ດຳເນີນການກວດກາ, ກວດສອບ ຫ້າສິບຫ້າສ່ວນຮ້ອຍ (55%) ເພື່ອບູລະນະກິຈັກການຈັດຕັ້ງ.

ໃນກໍລະນີ ບໍ່ມີຜູ້ສະໜອງຂໍ້ມູນ ຂ່າວສານ ຫຼື ຜູ້ບອກຂ່າວ ໃຫ້ເອົາ ສິບສ່ວນຮ້ອຍ (10%) ມອບເຂົ້າງົບປະມານແຫ່ງລັດ.

**<u>ຕົວຢ່າງ 06</u> :** (ການຄິດໄລ່ເງິນນະໂຍບາຍ 30%) ອີງຕາມຂໍ້ມູນໃນຕົວຢ່າງ 03 ຂ້າງເທິງ ພາຍຫຼັງຄິດໄລ່ຫັກເງິນນະໂຍບາຍແລ້ວເຫຼືອ 1,000,000,000 ກີບ ຕໍ່ການກວດກາ - ກວດສອບ 01 ຄັ້ງ.

**<u>ວິທີການຄິດໄລ່:</u>**

| | | | |
|---|---|---|---|
| 1. ຄິດໄລ່ຫັກເປັນເງິນນະໂຍບາຍ 30%<br>(ມູນຄ່າເກີນເພດານທີ່ກຳນົດໄວ້ໃນມາດຕາ 8 ຂໍ້ 2 ຂອງດຳລັດສະບັບນີ້) | = | 1,494,000,000 | ກີບ. |
| 2. ຫັກເຂົ້າງົບປະມານ ( 1 – 1 ຕື້ກີບ ) | = | 494,000,000 | ກີບ. |
| 3. ພື້ນຖານຄິດໄລ່ ( 1 – 2 ) | = | 1,000,000,000 | ກີບ. |
| 4. ຫັກ ຜູ້ບອກຂ່າວ 10% ( 3 x 10% ) | = | 100,000,000 | ກີບ. |
| 5. ຄະນະກວດກາ -ກວດສອບ ຫຼື ຄະນະສະເພາະກິດ 35% (3 x 35%) | = | 350,000,000 | ກີບ. |
| 6. ອົງການຈັດຕັ້ງທີ່ດຳເນີນການກວດກາ-ກວດສອບ 55% (3 x 55%) | = | 550,000,000 | ກີບ. |

ກໍລະນີ ບໍ່ມີຜູ້ບອກຂ່າວ (4) ເງິນຈຳນວນ 100,000,000 ກີບ ແມ່ນໃຫ້ມອບເຂົ້າງົບປະມານແຫ່ງລັດ.

**<u>ຕົວຢ່າງ 07</u> :** (ການຄິດໄລ່ເງິນນະໂຍບາຍ 40%) ບໍລິສັດ ກ ໄດ້ມີການໄລ່ລຽງພັນທະອາກອນປະຈຳປີ 2023 ແລະ ມີຄ່າປັບໃໝພັນທະອາກອນຕ່າງໆ ລວມເປັນເງິນທັງຈຳນວນ 2,494,000,000 ກີບ, ໃນນີ້ເປັນຄ່າປັບໃໝ ອມພ 1,494,000,000 ກີບ ແລະ ປັບໃໝ ອາກອນກຳໄລ 1,000,000,000 ກີບ ຕໍ່ການກວດກາ 01 ຄັ້ງ.

**<u>ວິທີການຄິດໄລ່:</u>**

| | | | |
|---|---|---|---|
| **ກ.** ຄິດໄລ່ຫັກເປັນເງິນນະໂຍບາຍ 40%<br>(ມູນຄ່າເກີນເພດານທີ່ກຳນົດໄວ້ໃນມາດຕາ 8 ຂໍ້ 2 ຂອງດຳລັດສະບັບນີ້) | = | 2,494,000,000 | ກີບ. |
| **ຂ.** ຫັກເຂົ້າງົບປະມານ ( ກ - 1 ຕື້ກີບ ) | = | 1,494,000,000 | ກີບ. |

ຄ. ພື້ນຖານຄິດໄລ່ ( ກ - ຂ ) = 1,000,000,000 ກີບ.

ງ. ຫັກ ຜູ້ບອກຂ່າວ 10% ( ຄ x 10% ) = 100,000,000 ກີບ.

ຈ. ຄະນະກວດກາ -ກວດສອບ ຫຼື ຄະນະສະເພາະກິດ 35% ( ຄ x 35% ) = 350,000,000 ກີບ.

ສ. ອົງການຈັດຕັ້ງທີ່ດໍາເນີນການກວດກາ-ກວດສອບ 55% ( ຄ x 55% ) = 550,000,000 ກີບ.

ກໍລະນີ ບໍ່ມີຜູ້ບອກຂ່າວ (ງ) ເງິນຈໍານວນ 100,000,000 ກີບ ແມ່ນໃຫ້ມອບເຂົ້າງົບປະມານແຫ່ງລັດ.

6. **ມາດຕາ 11 ການນໍາໃຊ້ເງິນ ບູລະນະກົງຈັກ.**

ເງິນບູລະນະການຈັດຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງດໍາລັດສະບັບນີ້ ໃຫ້ນໍາໃຊ້ເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານກວດກາ, ກວດສອບ ເພື່ອເຄື່ອນໄຫວຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ເປັນຕົ້ນນໍາໃຊ້ເຂົ້າວຽກງານຝຶກອົບຮົມ, ຈັດຊື້-ຈັດຈ້າງອຸປະກອນເຄື່ອງມືທັນສະໄໝ ແລະ ວຽກງານອື່ນໆ ທີ່ຈໍາເປັນຕໍ່ວຽກງານຮັບໃຊ້ວຽກງານກວດກາ, ກວດສອບ ແລະ ຕ້ານສະກັດກັ້ນ ຕ້ານການສໍ້ລາດບັງຫຼວງ. ໂດຍບໍ່ອະນຸຍາດໃຫ້ ການນໍາໃຊ້ບູລະນະກົງຈັກການຈັດຕັ້ງ ແບ່ງປັນ, ແຈກຢາຍ ເງິນນະໂຍບາຍ ພາຍໃນອົງກອນ ຫຼື ບໍ່ຖືກເປົ້າໝາຍ ລວມທັງນໍາເອົາເງິນນະໂຍບາຍ ໄປໃຊ້ຈ່າຍໂດຍບໍ່ຮັບອະນຸຍາດ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ ຍາດພີ່ນ້ອງ ຫຼື ພັກພວກ ຢ່າງເດັດຂາດ.

## III. ວິທີການຈັດຕັ້ງປະຕິບັດ

1. ມອບໃຫ້ ກົມກວດກາ ເປັນໃຈກາງໃນການເຜີຍແຜ່ ສົມທົບກັບ ຫ້ອງການກະຊວງ, ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ ແລະ ກົມກ່ຽວຂ້ອງຂອງ ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ບັນດາພະແນກການເງິນແຂວງ, ນະຄອນຫຼວງ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ, ແນະນໍາ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ຄໍາແນະນໍາ ສະບັບນີ້ ໃຫ້ການຈັດຕັ້ງລັດແຕ່ລະຂັ້ນຮັບຮູ້-ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ຢ່າງເຂັ້ມງວດ;
2. ຜ່ານການຈັດຕັ້ງປະຕິບັດ ຄໍາແນະນໍາ ສະບັບນີ້, ຫາກພົບຄວາມຫຍຸ້ງຍາກໃຫ້ລາຍງານກະຊວງການເງິນຕາມຂັ້ນຕອນ ເພື່ອແກ້ໄຂໃຫ້ທັນເວລາ;
3. ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບຸນປອນ ວັນນະຈິດ